**ການບ້ານບົດທີ 2 ພາກຕົ້ນ**

# ໂປໂລເອົາຊີລາໄປປະກາດພະທຳດ້ວຍກັນ

(ກຈກ 15:36-41)

*ກ່ອນທີ່ໂປໂລອອກໄປປະກາດພະທຳເທື່ອທີສອງນີ້ ມີການຜິດຖຽງກັນລະຫວ່າງໂປໂລ ກັບ ບາລະນາບາ. ໃຫ້ທ່ານເບິ່ງຮູບ **ກ** ແລະ **ຂ** ຕໍ່ໄປນີ້:*




**ກ** ( ກຈກ 15:36~37 )

ໃຫ້ອ່ານ ກຈກ 15:36-41 ແລ້ວຕອບຄຳຖາມຕໍ່ໄປນີ້:

**1** ທວນຄືນກ່ອນ!

ກ. ໃນຫຼັກສູດເລື່ອງໂປໂລເຫຼັ້ມທີໜຶ່ງ ທີ່ໂປໂລອອກເດີນທາງໄປປະກາດພະທຳເທື່ອທຳອິດ ເພິ່ນໄປ ເຖິງເຂດໃດ? ______________________________________

ຂ. ເມື່ອໄປປະກາດພະທຳເທື່ອທີສອງນີ້ ເພິ່ນປະກາດພະທຳໄປເຖິງອີກສອງແຂວງໃດ?

______________________ ແລະ ______________________

**2** ແຕ່ເມື່ອໂປໂລອອກເດີນທາງຈາກອັນຕີໂອເຂຍເທື່ອທີສອງນີ້ ເພິ່ນບໍ່ມີແຜນການຈະໄປເຖິງ ແຂວງ ມາເກໂດເນຍແລະອະຊາຢາ. ເພິ່ນຢາກກັບໄປຢ້ຽມພວກຄົນທີ່ຮັບເຊື່ອເປັນຄຼິດສະຕຽນ ໃນ ຄາລາເຕຍທີ່ເພິ່ນໄປເທື່ອກ່ອນເທົ່ານັ້ນ.

ກ. ຕາມໃນຮູບ **ກ** ເພິ່ນສະເໜີແຜນການນັ້ນໃຫ້ໃຜ? (ກຈກ 15:36) ______________

ຂ. ບາລະນາບາ ຢາກເອົາຜູ້ໃດໄປນຳ? (ກຈກ 15:37) ______________________




**3** ກ. ແມ່ນໃຜບໍ່ເຫັນດີໃຫ້ເອົາໂຢຮັນມາລະໂກໄປນຳ? ___________________________

ຂ. ໃນເທື່ອກ່ອນທີ່ອອກໄປປະກາດ ໂຢຮັນເຮັດຫຍັງ? __________________________




**4** ໂປໂລແລະບາລະນາບາຖົກຖຽງກັນຢ່າງແຮງຈົນເກີດຫຍັງຂຶ້ນ? (ກຈກ 15:39) ________

**5** ກ. ບາລະນາບາເອົາໃຜໄປນຳ? (ກຈກ 15:39) ______________________________

ຂ. ໂປໂລເອົາໃຜໄປນຳ? (ກຈກ 15:40) ____________________________________

ຄ. ຊີລາມາຈາກຄຣິດສະຕະຈັກໃດ? ______________________________________

ງ. ໃນ ກຈກ 15:22-23 ເຫັນວ່າຊີລາເປັນຜູ້ຕ່າງໜ້າຈາກຄຣິດສະຕະຈັກໃນກຸງເຢລູຊາເລັມຖື ຫຍັງ ໄປໃຫ້ພີ່ນ້ອງ? ____________________________________________

ຈ. ຖືໄປໃຫ້ພີ່ນ້ອງຄຣິດສະຕະຈັກໃດ? ___________________________________

**6** ກ. ດັ່ງນັ້ນເຫັນວ່າບາລະນາບາກັບໄປປະກາດພະທຳຢູ່ໃສ? _____________________

ຂ. ເອົາໃຜໄປນຳ? ________________________________________________

ຄ. ໃຫ້ເປີດອ່ານ ກລຊ 4:10. ໂຢຮັນມາລະໂກນັ້ນ ເປັນຍາດພີ່ນ້ອງຂອງບາລະນາບາຢ່າງໃດ?

______________________________________________________________

**7** ຄຣິດສະຕະຈັກໃນເມືອງອັນຕີໂອເຂຍອ້ອນວອນຝາກສອງຄົນໃດໄວ້ໃນພະຄຸນຂອງພະເຈົ້າ? (ກຈກ 15:40) ______________________ ແລະ ________________________
ແລ້ວໂປໂລອອກເດີນທາງໄປປະກາດພະທຳເປັນເທື່ອທີສອງ!




**8** ໂປໂລເປັນຄົນເມືອງໃດ? (ກຈກ 21:39) ________________________________
ແຂວງໃດ? ________________________________________________________
ດັ່ງນັ້ນ ໂປໂລອາດຈະຜ່ານໄປທາງບ້ານເກີດເມືອງນອນ.

**9** ຕາມ ກຈກ 4:36 ບາລະນາບາເປັນຄົນເມືອງໃດ? ____________________________
ດັ່ງນັ້ນ ບາລະນາບາກໍກັບໄປບ້ານເກີດເມືອງນອນດ້ວຍ.

ໃຫ້ທ່ານເປີດພະຄຳພີ ກິດຈະການ 16:1 ແລະໃນບ່ອນວ່າງລະຫວ່າງ ກຈກ 15:41 ແລະ 16:1 ໃຫ້ຂຽນຄຳວ່າ "ໂປໂລອອກໄປປະກາດພະທຳເທື່ອທີສອງ"

*ຈົ່ງພິຈາລະນາ*

- *ໃຫ້ທ່ານເປີດອ່ານຂໍ້ຄວາມຂອງພະເຢຊູ ໃນ ລູກາ 9:62 ເລື່ອງຄົນທີ່ຖະຫວາຍຕົວໃຫ້ຕິດຕາມ ພະເຢຊູແຕ່ຍັງມີໃຈຢາກຫຼຽວຄືນຫຼັງ. ຖ້າຄິດເຖິງເລື່ອງຂອງໂຢຮັນມາລະໂກນັ້ນ ແມ່ນໂປໂລຫຼືບາລະນາບາທີ່ຖືກຄຳເຕືອນນັ້ນໜັກກວ່າ.*
- *ມີສິ່ງໃດໃນຊີວິດຂອງທ່ານເອງທີ່ເຮັດໃຫ້ທ່ານຢາກຫຼຽວຄືນຫຼັງບໍ່?*
- *ຕາມໃນ ຟລປ 3:13-14 ເປັນຕົວຢ່າງໃນການຕໍ່ສູ້ກັບການທົດລອງທີ່ຢາກໃຫ້ເຮົາຫຼຽວຄືນຫຼັງເອົາສິ່ງທີ່ຜ່ານພົ້ນໄປແລ້ວ.*

ຄຳຕອບ:

**1** *ກ. ຄາລາເຕຍ ຂ. ມາເກໂດເນຍ ແລະ ອະຊາຢາ*

**2** *ກ. ບາລະນາບາ ຂ. ໂຢຮັນ (ມາລະໂກ)*

**3** *ກ. ໂປໂລບໍ່ເຫັນດີ ຂ. ປະເຂົາໄປ*

**4** *ຈຶ່ງແຍກຈາກກັນ*

**5** *ກ. ໂຢຮັນ ມາລະໂກ ຂ. ຊີລາ ຄ. ເຢລູຊາເລັມ*

*ງ. ຈົດໝາຍ (ລາຍງານຈາກການລວມໃນກຸງນັ້ນ) ຈ. ອັນຕີໂອເຊຍ*

**6** *ກ. ເກາະກຸບໂລ ຂ. ໂຢຮັນມາລະໂກ ຄ. ເປັນນ້ອງ (ທີ່ຈິງເປັນລູກອ້າຍລູກນ້ອງ)*

**7** *ໂປໂລ ແລະ ຊີລາ*

**8** *ຕາໂຊ ກີລີເກຍ*

**9** *ເກາະກຸບໂລ*

## ການບ້ານບົດທີ 2 ພາກປາຍ

# ຕີໂມທຽວຮ່ວມທາງກັບໂປໂລໃນເມືອງລີຊະທາ

(ກຈກ 16:1-5)




**1** ກ. ຕາມທີ່ທ່ານໝາຍໄວ້ໃນພະຄຳພີ ເຫດການໃນ ກຈກ 16:1-5 ແມ່ນໃນເທື່ອໃດທີ່ໂປໂລ ອອກ ໄປປະກາດພະທຳ? ____________________

ຂ. ໂປໂລຜ່ານແຂວງກີລີເກຍ. ແມ່ນໃຜທີ່ເດີນທາງນຳໂປໂລໃນເທື່ອນີ້? ____________________

ຄ. ໄປເມືອງເດລະເບແລະເມືອງໃດອີກ? ____________________

ງ. ເຫັນລູກສິດຜູ້ໜຶ່ງຊື່ຫຍັງ? ____________________

ຈ. ຕີໂມທຽວຮັບເຊື່ອເມື່ອໂປໂລໄປປະກາດພະທຳໃນເທື່ອໃດ? ____________________

**2** ໃຫ້ອ່ານ 2 ຕມທ 1:5 ມີອີກສອງຄົນໃນຄອບຄົວນັ້ນທີ່ເຊື່ອ.

ກ. ແມ່ເຖົ້າຂອງຕີໂມທຽວຊື່ຫຍັງ? ____________________

ຂ. ແມ່ຂອງຕີໂມທຽວຊື່ຫຍັງ? ____________________

**3** ໂປໂລໄປປະກາດພະທຳກ່ອນ ແລ້ວອີກຫຼາຍປີທີ່ຫຼັງ ເພິ່ນອ້າງເຖິງຄົນທີ່ຮັບເຊື່ອໃນຈົດໝາຍ, ຄົນນັ້ນແມ່ນໃຜ? ____________________

**4** ຕີໂມທຽວເປັນລູກຊອດ (ກຈກ 16:1)

ກ. ແມ່ເປັນຊາດໃດ? ____________________

ຂ. ພໍ່ເປັນຊາດໃດ? ____________________

**5** ພວກພີ່ນ້ອງໃນເມືອງລີຊະທາແລະເມືອງອີໂກນີອົນ ຖືວ່າຕີໂມທຽວເປັນຄົນຢ່າງໃດ? (ກຈກ 16:2) ____________________

**6** ຕາມໃນ ກຈກ 16:3

ກ. ແມ່ນໃຜຢາກໃຫ້ຕີໂມທຽວໄປນຳ? ____________________

ຂ. ໂປໂລໃຫ້ເພິ່ນຮັບພິທີໃດກ່ອນ? ____________________

**7** ເປັນຕາງຶດແທ້ ໆ! ໃນເມື່ອກ່ອນນັ້ນ ໂປໂລບໍ່ໃຫ້ໃຜຮັບພິທີຕັດ? (ຄລຕ 2:3) __________

**8** ຄວາມຈິງແລ້ວມັນແມ່ນຄົນລະເລື່ອງ

ກ. ຕີໂຕເປັນຊາດໃດ? ____________________________________________

ຂ. ແຕ່ຕີໂມທຽວເປັນຊາດປະສົມ ແມ່ເປັນຊາດຢິວ ແຕ່ພໍ່ເປັນຊາດໃດ? (ກຈກ 16:3)_____

**9** ຕາມຄວາມເຫັນຂອງຊາວຢິວ ຄົນໃດທີ່ເກີດຈາກແມ່ຊາວຢິວກໍເປັນຊາວຢິວ.

ກ. ໂປໂລບໍ່ເຫັນດີໃຫ້ຕີໂຕຮັບພິທີຕັດເພາະເປັນຊາດໃດ? ______________________

ຂ. ແຕ່ຊາວຢິວເຫັນວ່າຕີໂມທຽວເປັນຊາດໃດ? _____________________________

ຄ. ດັ່ງນັ້ນໂປໂລເຫັນດີໃຫ້ຄົນໃດຮັບພິທີຕັດ? ________________________________

ງ. ບໍ່ເຫັນດີໃຫ້ຄົນໃດຮັບພິທີຕັດ? ______________________________________

*ໃນການຫ້າມບໍ່ໃຫ້ຕີໂຕຮັບພິທີຕັດ ໂປໂລຢືນຢັນວ່າ ບໍ່ຕ້ອງຮັບພິທີຕັດຈຶ່ງຈະໄດ້ຮັບລອດພົ້ນ. ທີ່ໂປໂລໃຫ້ຕີໂມທຽວຮັບພິທີຕັດນັ້ນ ຍ້ອນເພິ່ນເປັນຊາດຢິວ ເພາະແມ່ເປັນຄົນຢິວ. ແລະອີກຢ່າງນັ້ນ ຕີໂມທຽວຈະ ມີສິດເຕັມສ່ວນເຂົ້າໄປປະກາດພະທຳໃນໂຮງທຳຢິວ.*

**10** ກ. ໃນສອງຄົນນັ້ນ ແມ່ນໃຜເປັນຊາດກຼີກເຕັມສ່ວນ? _________________________

ຂ. ໃຜມີແມ່ເປັນຊາດຢິວ? ___________________________________________

ຄ. ຄົນໃດທີ່ໂປໂລບໍ່ໃຫ້ຮັບພິທີຕັດ ເພາະເນັ້ນຄຳວ່າ ຄວາມລອດບໍ່ໄດ້ມາທາງພິທີຕັດ? _____

ງ. ຄົນໃດທີ່ໂປໂລເຫັນດີໃຫ້ຮັບພິທີຕັດ ເພາະແມ່ເປັນຊາດຢິວ? _________________

**11** ເມື່ອເຂົາອອກໄປປະກາດພະທຳຕາມເມືອງຕ່າງ ໆ ເຂົາໄດ້ມອບຂໍ້ບັງຄັບທີ່ພວກອັກຄະສາວົກພວກເຖົ້າແກ່ໄດ້ຕົກລົງໃຫ້ຮັກສາ.

ເຂົາຕົກລົງການນັ້ນໃນກຸງໃດ? (ກຈກ 16:4) ______________________________

**12** ຕາມໃນ ກຈກ 16:5

ກ. ຄຼິດສະຕະຈັກເຫຼົ່ານັ້ນເຂັ້ມແຂງຂຶ້ນໃນດ້ານໃດ? ___________________________

ຂ. ແລະຈຳນວນຄຼິດສະຕະສະມາຊິກເປັນຢ່າງໃດ? ___________________________

**13** ຈາກນີ້ຕໍ່ໄປພວກຜູ້ປະກາດພະທຳນີ້ ປະກອບດ້ວຍ 3 ຄົນໃດ?

________________ ________________ ແລະອີກຄົນໜຶ່ງຄື ______________

*ຮັບພິຈາລະນາ*

**14** ອີກ 10 ປີຕໍ່ມາ ໂປໂລຂຽນເລື່ອງຕີໂມທຽວໃນ ຟລປ 2:19-22.

ກ. ຂໍ້ໃດທີ່ອ້າງເຖິງທ່າທີຄ້າຍຄືກັບໂຢຮັນມາລະໂກເຄີຍເປັນແຕ່ກ່ອນ? ______________

ຂ. ສອງຂໍ້ໃດກ່າວເຖິງອຸປະນິໄສຂອງຕີໂມທຽວ? ________________________________

ໂປໂລບອກວ່າຕີໂມທຽວເອົາໃຈໃສ່ໃນຄວາມສຸກທຸກຂອງພີ່ນ້ອງໃນຂໍ້ 20.

ໂປໂລກ່າວເລື່ອງຄຸນຄ່າຂອງຕີໂມທຽວໃນຂໍ້ 22.

**15** ແມ່ນໃຜທີ່ໜູນໃຈໂປໂລ (ກຈກ 18:9)? ____________________________________

ໃຫ້ກັບໄປເບິ່ງຮູບ ໜ້າ 7 ຮູບໃດສະແດງເຖິງເຫດການນັ້ນ? ________________________

*ໃຫ້ທ່ານພິຈາລະນາຊີວິດສ່ວນຕົວ ທ່ານຄ້າຍຄືຕີໂມທຽວຢ່າງໃດຫຼືອາດຈະຄ້າຍຄືກັບໂຢຮັນ-ມາລະໂກ.*

*ເມື່ອທ່ານໝົດຫວັງ ທ່ານຈະຮັບການໜູນໃຈຢ່າງໃດ?*

ໃຫ້ທວນຄືນກ່ອນ ແລ້ວຕອບບົດເສັງ!

ຄຳຕອບ:

| | |
|---|---|
| ***1*** | *ກ. ເທື່ອທີສອງ ຂ. ຊີລາ ຄ. ລີຊະທາ ງ. ຕີໂມທຽວ ຈ. ເທື່ອທຳອິດ* |
| ***2*** | *ກ. ໂລອີ ຂ. ຢູນີເກ* |
| ***3*** | *ຕີໂມທຽວ* |
| ***4*** | *ກ. ຢິວ ຂ. ກຼີກ* |
| ***5*** | *ມີຊື່ສຽງດີໃນທ້າມກາງເຂົາ* |
| ***6*** | *ກ. ໂປໂລ ຂ. ພິທີຕັດ* |
| ***7*** | *ຕີໂຕ* |
| ***8*** | *ກ. ຕ່າງຊາດ (ບໍ່ເປັນຊາດຢິວ) ຂ. ກຼີກ* |
| ***9*** | *ກ. ຕ່າງຊາດ ຂ. ຢິວ ຄ. ຕີໂມທຽວ ງ. ຕີໂຕ* |
| ***10*** | *ກ. ຕີໂຕ ຂ. ຕີໂມທຽວ ຄ. ຕີໂຕ ງ. ຕີໂມທຽວ* |
| ***11*** | *ເຢລູຊາເລັມ* |
| ***12*** | *ກ. ຄວາມເຊື່ອ ຂ. ທະວີຂຶ້ນທຸກ ໆ ວັນ* |
| ***13*** | *ໂປໂລ ຊີລາ ແລະ ຕີໂມທຽວ* |
| ***14*** | *ກ. ຂໍ້ 21 ຂ. ຂໍ້ 20 ແລະ 22* |
| ***15*** | *ພະຜູ້ເປັນເຈົ້າ ຮູບ ງ* |

ໃນການປະຊຸມບົດທີ 2

# ຈົດໝາຍຂອງໂປໂລທີ່ມີໄປເຖິງຕີໂມທຽວ

*ໃນບົດຮຽນທີ່ຜ່ານມາ ເຮົາສຶກສາເລື່ອງທີ່ຕີໂມທຽວເຂົ້າຮ່ວມກັບໂປໂລແລະຊີລາໃນ ການປະກາດພະທຳ. ອີກຫຼາຍປີຕໍ່ໄປ ໂປໂລຂຽນຈົດໝາຍສອງສະບັບໄປເຖິງຕີໂມທຽວ ທີ່ບອກ 3 ປະການໃຫ້ເຮົາຄື:*

- *ລັກສະນະຂອງຕີໂມທຽວ*
- *ສິ່ງທີ່ໂປໂລສອນ*
- *ວິທີສອນ*

## ລັກສະນະຂອງຕີໂມທຽວ

**1** ໃນເມື່ອໂປໂລຂຽນຈົດໝາຍ ຕີໂມທຽວຢູ່ເມືອງໃດ? (1 ຕມທ 1:3) ________________

| |
|---|
| ຝຶກ: ໃຫ້ເອົາບິກແດງຂີດອ້ອມ ຄຳວ່າ "ເອເຟໂຊ" ໃນ 1 ຕມທ 1:3 ແລະໃນ 2 ຕມທ 1:18 ເພື່ອສະແດງວ່າ ຕີໂມທຽວອາດຈະຮັບຈົດໝາຍທັງສອງສະບັບນັ້ນ ໃນເມືອງເອເຟໂຊ. |

**2** ຄອບຄົວຂອງຕີໂມທຽວເປັນຢ່າງໃດ? (2 ຕມທ 1:5 ແລະ 3:15 ກຈທ 16:1)

______________________________________________________________

______________________________________________________________

______________________________________________________________

**3** ກ. ໃນ 1 ຕມທ 1:2 ເຫັນວ່າຕີໂມທຽວເປັນລູກຂອງໂປໂລໃນທຳນອງໃດ? ___________

ຂ. ໃນ 1 ກລທ 4:17 ເຫັນວ່າ ຕີໂມທຽວເປັນຄົນຢ່າງໃດ? ______________________

ຄ. ໃນ ຟລປ 2:22 ເຫັນວ່າຕີໂມທຽວຮັບໃຊ້ຮ່ວມກັບໂປໂລໃນການໃດ? ____________

______________________________________________________________

ງ. ໃນ 1 ຕມທ 1:18 ເຫັນວ່າ ມີຄຳທຳນວາຍທີ່ກ່າວເຖິງໃຜມາກ່ອນ? _______________

**4** ຕາມໃນ ກຈທ 16:1 ເຫັນວ່າໂປໂລມາເຖິງລີຊະທາເທື່ອທີສອງນີ້ ຕີໂມທຽວເປັນຄຣິດສະຕຽນແລ້ວ. ດັ່ງນັ້ນກະວ່າເພິ່ນອາດຈະຮັບເຊື່ອພະເຢຊູໃນເທື່ອໃດທີ່ໂປໂລໄປປະກາດພະທຳຢູ່ລີຊະທາ? ______________________________________________

*ໃຫ້ອ່ານ ກຈກ 14:8-20 ອີກ!*

| |
|---|
| ເພື່ອຈະຫາຂໍ້ຕ່າງ ໆ ທີ່ກ່າວເລື່ອງລັກສະນະຂອງຕີໂມທຽວໄດ້ງ່າຍ ໃຫ້ທ່ານຂຽນ ຄຳວ່າ "ຕມທ" ໃສ່ເຈ້ຍຂ້າງຂໍ້ພະຄຳພີຕໍ່ໄປນີ້: 1 ຕມທ 1:2 2 ຕມທ 1:5 ແລະ 2 ຕມທ 3:15 |

**5** ຖ້າເຮົາຈະຮຽນເລື່ອງລັກສະນະຂອງຕີໂມທຽວຢ່າງລະອຽດແມ່ນ ຍັງມີອີກຫຼາຍຂໍ້ພະຄຳພີ. (ແລ້ວໃຫ້ຂຽນ "ຕມທ" ໃສ່ຂອບເຈ້ຍຂ້າງທຸກຂໍ້ເຫຼົ່ານັ້ນດ້ວຍ.)

ກ. ໃນ 1 ຕີໂມທຽວ 4:12 ເຫັນວ່າເພິ່ນປາກົດຕົວຢ່າງຄົນໄວໃດ? ____________________

ຂ. ຕາມໃນ 1 ຕມທ 5:23 ເຫັນວ່າເພິ່ນອາດຈະມີໂລກຢ່າງໃດ? ____________________

ຄ. ຕາມໃນ 2 ຕມທ 1:4 ຕີໂມທຽວອາດຈະເປັນຄົນມີໃຈຢ່າງໃດ? __________________

ງ. ໃນ 2 ຕມທ 1:7 ໂປໂລເຕືອນເລື່ອງຫຍັງ? __________________________________

ຈ. ໃນ 2 ຕມທ 1:8 ເຕືອນເລື່ອງຫຍັງ? ______________________________________

ສ. ໃນ 2 ຕມທ 2:3-7 ໂປໂລບອກວ່າຈົ່ງມີສ່ວນຮ່ວມຫຍັງ? ________________________

ຊ. ໃນ 2 ຕມທ 2:22 ຈົ່ງຫຼີກໜີຈາກຫຍັງ? ____________________________________

ຍ. ໃນ 1 ຕມທ 5:2 ໂປໂລເຕືອນໃຫ້ມີຄວາມສຳພັນຢ່າງໃດກັບຜູ້ຍິງຄົນໜຸ່ມ? __________

______________________________________________________________________

- *ໝາຍເຫດ: ຕີໂມທຽວແມ່ນຍັງໜຸ່ມຫຼາຍ. ເຮົາບໍ່ຮູ້ເລື່ອງພໍ່ຂອງເພິ່ນວ່າເປັນຢ່າງໃດ ອາດຈະແມ່ນ ພໍ່ເພິ່ນບໍ່ຢູ່ຫຼືຕາຍແລ້ວ. ດັ່ງນັ້ນ ເພິ່ນອາດຈະຖືວ່າໂປໂລເປັນພໍ່ຂອງເພິ່ນ.*

## ດ້ານຄຳສອນ ແລະ ວິທີສອນ ຂອງໂປໂລ

**6** ໂປໂລເລືອກເອົາຊາຍໜຸ່ມຄົນໜຶ່ງ ຈາກຄຼິດສະຕະຈັກໃນເມືອງລີຊະທາທີ່ຈະມາຮ່ວມປະກາດພະທຳ. ໃຫ້ອ່ານ 2 ຕມທ 3:10-11

ກ. ໃນຂໍ້ທີ 10 ນັ້ນ ໂປໂລສອນດ້ານໃດ? ____________________________________

______________________________________________________________________

ຂ. ໃນດ້ານທີ່ໂປໂລສອນນັ້ນ ຕີໂມທຽວອາດຂາດຢ່າງໃດແດ່ເປັນຕົ້ນ? ________________

______________________________________________________________________

**7** ໃນຂໍ້ທີ 11 ເຫັນວິທີທີ່ໂປໂລສອນ ເພິ່ນສອນຢ່າງໃດ? (ເລືອກ)

ກ. ສອນຈາກປຶ້ມແບບຮຽນ

ຂ. ສອນໂດຍຄຳປາໄສ

ຄ. ສອນໂດຍການເປັນຕົວຢ່າງ

**8** ກ. ແມ່ນໃຜສະແດງຕົວຢ່າງໃຫ້ຕີໂມທຽວ? ___________________________________

ຂ. ໂປໂລຖືກຂົ່ມເຫັງໃນສາມເມືອງຄືເມືອງໃດ? (ຂໍ້ 11) ___________________________

______________________________________________________________________

ຄ. ແມ່ນໃຜທີ່ຮຽນຮູ້ຈາກຕົວຢ່າງຂອງໂປໂລ? __________________________________

| |
|---|
| ໃຫ້ຂຽນຄຳວ່າ "ດ້ານຄຳສອນ" ໃສຂອບເຈ້ຍຂ້າງ 2 ຕມທ 3:10<br>ແລະຂຽນຄຳວ່າ "ວິທີສອນ" ຂ້າງ 2 ຕມທ 3:11 |

**9** ກ່ອນອື່ນ ໂປໂລສອນໃຫ້ຜູ້ທີ່ຮຽນໄວ້ວາງໃຈໃນພະທຳຂອງພະເຈົ້າແລະໃຫ້ເຂົາປະຕິບັດຕາມດ້ວຍ. ໃຫ້ອ່ານ 2 ຕມທ 3:16.

ກ. ແມ່ນໃຜບັນດົນໃຈໃຫ້ນັກປະພັນຂຽນພະຄຳ? ______________________________

ຂ. ພະຄຳນັ້ນເປັນປະໂຫຍດໃນ 4 ດ້ານຄືດ້ານໃດ?

_______________________________________________________________

_______________________________________________________________

_______________________________________________________________

_______________________________________________________________

- *ໝາຍເຫດ: ເຮົາໝາຍພະຄຳພີໄວ້ເພື່ອຈະເປັນປະໂຫຍດທີ່ໃຊ້ໄດ້ງ່າຍ.*

**10** ໃຫ້ອ່ານ 2 ຕມທ 3:17.

ກ. ຄົນທີ່ບັນລຸຜົນສຳເລັດ ຕາມຄຳສອນຂອງໂປໂລ ຈັດຕຽມໄວ້ພ້ອມສຳລັບການໃດ?

_______________________________________________________________

ຂ. ໂປໂລສອນທາງດ້ານທິດສະດີ ຫຼືດ້ານການປະຕິບັດຫຼາຍກວ່າ? _________________

**11** ໃຫ້ອ່ານ 1 ຕມທ 4:7. ຈົ່ງຝຶກຕົນໃນການໃດ? _________________________________

| ໃຫ້ຂຽນຄຳວ່າ " ວິທີ " ຂ້າງ 1 ຕມທ 4:7. |
|---|

**12** ໃຫ້ອ່ານ 1 ຕມທ 4:8.

ກ. ແມ່ນການຝຶກຫັດຢ່າງໃດທີ່ມີປະໂຫຍດແຕ່ບາງຢ່າງ? _________________________

ຂ. ມີອັນໃດທີ່ມີປະໂຫຍດທຸກຢ່າງ? ________________________________________

| ໃຫ້ຂຽນຄຳ " ວິທີ " ຂ້າງ 1 ຕມທ 4:8. |
|---|

**13** ໃຫ້ອ່ານ 1 ຕມທ 4:10.

ກ. ຈົ່ງເຮັດການເຖິງຂະໜາດໃດ? ____________________________________________

ຂ. ເຮັດເຖິງຂະ ນາດນັ້ນເພາະຫຍັງ? __________________________________________

| ໃຫ້ຂຽນຄຳວ່າ " ວິທີ " ຂ້າງ 1 ຕມທ 4:10. |
|---|

**14** ກ. ໃຫ້ອ່ານ 1 ຕມທ 4:15. ຈົ່ງໝັ່ນຮ່ຳເພິງຂໍ້ຄວາມເຫຼົ່ານັ້ນຢ່າງໃດ? ________________

ຂ. ເພື່ອຫຍັງ? ____________________________________________________________

| ໃຫ້ຂຽນຄຳວ່າ " ວິທີ " ຂ້າງ 1 ຕມທ 4:15. |
|---|

**15** ໃຫ້ອ່ານ 1 ຕມທ 4:16. ຖ້າເຮົາລະວັງຕົວ ແລະລະວັງການສັ່ງສອນຂອງຕົນເອງໃຫ້ດີ ເຮັດຢ່າງນັ້ນເປັນການຊ່ວຍຕົນເອງ ແລະຄົນທັງຫຼາຍທີ່ຟັງເພື່ອຫຍັງ? _______________

| |
|---|
| ໃຫ້ຂຽນຄຳ " ວິທີ " ຂ້າງ 1 ຕມທ 4:16. |

**16** ກ. ໃຫ້ທ່ານເບິ່ງສັນຍາລັກຂອງ ຫຼັກສູດ ສ. ອ. ນ. ຢູ່ໜ້າປົກປຶ້ມນີ້. ຍົກບົດໃດ ຂໍ້ໃດໃນພະຄຳພີ?_______________

ຂ. ເປົ້າໝາຍປາຍທາງຂອງ ຫຼັກສູດ ສ. ອ. ນ. ຄືມອບຄຳສອນໄວ້ກັບຄົນທີ່ຊື່ສັດທີ່ຈະສາມາດເຮັດຫຍັງ? _______________

| |
|---|
| ໃຫ້ຂຽນຄຳວ່າ " ວິທີ " ຂ້າງ 2 ຕມທ 2:2. |

**17** ສ່ວນຄົນທີ່ຮຽນຮູ້ວິຊາຫຼືຝີມື ມີບາງຄົນທີ່ຮຽນທິດສະດີໃນໂຮງຮຽນ ແລະບາງຄົນຮຽນໂດຍຝຶກຫັດກັບ ຜູ້ຊຳນານ. ເຊັ່ນດຽວກັນກັບຄົນທີ່ຮຽນພະຄຳພີ. ບາງຄົນເຂົ້າໂຮງຮຽນແລະບາງຄົນຮຽນຢ່າງ ເປັນກັນເອງຈາກຜູ້ຊຳນານ. ໃນສາຍຕາຂອງໂປໂລການຮຽນພະຄຳພີຢ່າງເປັນກັນເອງ ກໍເປັນຜົນ ປະໂຫຍດ. ໃນ 2 ຕມທ 3:17 ໂປໂລຂຽນໄວ້ວ່າ ພະຄຳທຸກຕອນກໍເພື່ອຄົນຂອງພະເຈົ້າຈະ ບັນລຸຜົນສຳເລັດ ຕີໂມທຽວເປັນຜູ້ໜຶ່ງທີ່ບໍ່ໄດ້ເຂົ້າໂຮງຮຽນ ແຕ່ຮຽນຈາກອາຈານໂປໂລຢ່າງເປັນກັນ ເອງ.

ກ. ຕີໂມທຽວເປັນຜູ້ນຳໃນຄຼິດສະຕະຈັກເຂດໃດ? (1 ຕມທ 1:3) _______________

ຂ. ໃຫ້ອ່ານ 2 ຕີໂມທຽວ 2:2 ອີກ ແລະ 1 ຕມທ 5:22. ແມ່ນໃຜທີ່ຮັບພາລະໃນການສອນ ຜູ້ນຳຄົນອື່ນ ໆ? _______________

*ມີເລື່ອງຫຼັກຄວາມເຊື່ອຫຼາຍເລື່ອງ ທີ່ໂປໂລສອນຕີໂມທຽວ ເພື່ອຈະໃຫ້ຕີໂມທຽວສອນຄົນອື່ນອີກຕໍ່ໄປ. ລຸ່ມນີ້ມີຊື່ເລື່ອງເຫຼົ່ານັ້ນ.*

*ກ. ເລື່ອງບັນຫາຄົນສອນບໍ່ຈິງ. (1 ຕມທ 1:3-10, 1 ຕມທ 4:1-5, 1 ຕມທ 6:3-5)*

*ຂ. ເລື່ອງລະບຽບການອ້ອນວອນ (1 ຕມທ 2:1-4 ແລະ 8)*

*ຄ. ຄຸນສົມບັດຂອງຜູ້ດູແລ (1 ຕມທ 3:1-13)*

*ງ. ພວກອາວຸໂສ ແລະຄົນໜຸ່ມ (1 ຕມທ 5:1-2)*

*ຈ. ການຮັກສາແມ່ໝ້າຍ (1 ຕມທ 5:3-16)*

*ສ. ການນັບຖືຄົນເຖົ້າແກ່ (1 ຕມທ 5:17-22)*

*ຊ. ບັນຫາດ້ານສັງຄົມ (1 ຕມທ 6:1-2)*

*ຍ. ການປະຕິບັດຕົວ ຂອງຜູ້ຍິງເປັນຕົ້ນ (1 ຕມທ 2:9-10) ທົ່ວໄປ (1 ຕມທ 6:5-10)*

*ດ. ຂ້າໃຊ້ທີ່ດີຂອງພະເຢຊູຄຼິດ (1 ຕມທ 4:6-16, 2 ຕມທ 2:1-7, 2 ຕມທ 2:14 ເຖິງ 4:5)*

*ຕ. ຫຼັກຄວາມເຊື່ອ (1 ຕມທ 1:17, 1 ຕມທ 2:5-6, 1 ຕມທ 6:13-16, 2 ຕມທ 1:9-10, 2 ຕມທ 2:11-13)*

ຖ້າຍັງມີເວລາໃຫ້ເລືອກເອົາສອງຫຼືສາມປະການໃນລາຍຊື່ນັ້ນ ມາສະເ ນີຕໍ່ ປະຊຸມ ເພື່ອແລກປ່ຽນຄວາມຄິດຄວາມເຫັນກັນ. ຖ້າບໍ່ມີເວລາທ່ານກັບໄປ ບ້ານແລ້ວໃຫ້ ຮໍາເພິງໃນເລື່ອງເຫຼົ່ານັ້ນ.

*ໃຫ້ອ້ອນວອນຮ່ວມກັນ ຂໍພະເຈົ້າຊ່ວຍພວກເຮົາໃຫ້ປະຕິບັດຊີວິດຕາມທີ່ໄດ້ຮຽນມາ (ຄືບໍ່ແມ່ນພຽງແຕ່ຈະ ຮຽນຮູ້ເລື່ອງຄວາມຮັກ ເລື່ອງຄວາມເຊື່ອ ເລື່ອງຄວາມອົດທົນຢ່າງດຽວ ແຕ່ໃຫ້ມີຄວາມຮັກ ຄວາມເຊື່ອ ໃຈອົດທົນຢ່າງແທ້ຈິງ.*

*ຢ່າລືມບົດເສັງ ແລະການບ້ານ.*

ຄໍາຕອບ:

**1** *ເມືອງເອເຟໂຊ*

**2** *ພໍ່ຂອງຕີໂມທຽວເປັນຊາດກຼີກ ແມ່ທີ່ຊື່ວ່າຢູນິເກ ແລະ ແມ່ເຖົ້າທີ່ຊື່ວ່າໂລອີເປັນຊາດຢິວ ທີ່ມີຄວາມເຊື່ອອັນຈິງໃຈ. ເຂົາສອນພະທໍາຕັ້ງແຕ່ຕີໂມທຽວຍັງນ້ອຍຢູ່.*

**3** *ກ. ໃນຄວາມເຊື່ອ ຂ. ສັດຊື່ ຄ. ໃນການປະຕິບັດຂ່າວປະເສີດ ງ. ເຖິງຕີໂມທຽວ*

**4** *ເທື່ອທີໜຶ່ງ*

**5** *ກ. ໄວໜຸ່ມ ຂ. ໂລກກະເພາະແລະອ່ອນແຮງ ຄ. ອາດຈະເຈັບໃຈງ່າຍ ງ. ເລື່ອງໃຈຍ້ານກົວ ຈ. ຢ່າລະອາຍ ສ. ຮ່ວມທຸກ ຊ. ລາຄະຕັນຫາຂອງຄົນໜຸ່ມ ຍ. ໃຫ້ເປັນເໝືອນອ້າຍນ້ອງໂດຍມີໃຈບໍລິສຸດ*

**6** *ກ. ກິລິຍາ ຄວາມມຸ້ງໝາຍ ຄວາມເຊື່ອ ຄວາມພຽນ ຄວາມຮັກ ຄວາມໝັ້ນຄົງ. ຂ. (ຄໍາຕອບບໍ່ຕາຍຕົວ ແຕ່ອາດຈະຂາດ ກິລິຍາ ຄວາມພຽນ ແລະ ຄວາມໝັ້ນຄົງ)*

**7** *ຄ ຖືກ*

**8** *ກ. ໂປໂລ ຂ. ອັນຕິໂອເຂຍ ອີໂກນີອົນ ແລະ ລີຊະທາ ຄ. ຕີໂມທຽວ*

**9** *ກ. ພະເຈົ້າ ຂ. ການສອນ ການກ່າວຕັກເຕືອນວ່າກ່າວ ການປັບປຸງແກ່ໄຂໃຫ້ຖືກຕ້ອງ ການອົບຮົມໃນທາງຊອບທໍາ*

**10** *ກ. ການດີທຸກຢ່າງ ຂ. ການປະຕິບັດຫຼາຍກວ່າ*

**11** *ໃນການນັບຖືພະເຈົ້າ*

**12** *ກ. ທາງກາຍ ຂ. ການນັບຖືພະເຈົ້າຢ່າງຖືກຕ້ອງ*

**13** *ກ. ເຮັດການໜັກໜ່ວງແລະອົດສາສູ້ ຂ. ເພາະເຮົາໄວ້ວາງໃຈໃນພະເຈົ້າ*

**14** *ກ. ດ້ວຍສຸດໃຈ ຂ. ເພື່ອຄວາມຈະເລີນ ຈະໄດ້ປາກົດແກ່ຄົນທັງປວງ*

**15** *ໃຫ້ພົ້ນ*

**16** *ກ. 2 ຕມທ 2:2 ຂ. ສາມາດສອນຄົນອື່ນໄດ້ດ້ວຍ.*

**17** *ກ. ເອເຟໂຊ ຂ. ຕີໂມທຽວ*